# ຫຼັກສູດ ສຳລັບອົບຮົມ ອາສາສະມັກ ໄວໜຸ່ມ "ເພືອນຊ່ວຍເພື່ອນ"

ສະມາຄົມສົ່ງເສີມສຸຂະພາບຄອບຄົວ, 2016

# ບົດທີ 4 (25 ນາທີ)

# ຄຸນລັກສະນະພິເສດຂອງໄວລຸ້ນ

# ຈຸດພິເສດສະເພາະຂອງໄວລຸ້ນ

ໄລຍະອາຍຸ ຂອງຄົນໜຸ່ມ ຖືກຈັດແບ່ງດັ່ງນີ້:

- ໄວລຸ້ນ : 10 - 19
- ໄວໜຸ່ມ : 15 - 24
- ຄົນໜຸ່ມ : 10 – 24

ມີປາກົດການປ່ຽນແປງທີ່ສຳຄັນ ໃນໄລຍະເປັນໄວລຸ້ນ:

- ມີການຂະຫຍາຍຕົວ ດ້ານຮ່າງກາຍ
- ມີການຂະຫຍາຍຕົວ ດ້ານຈິດໃຈ/ການພົວພັນສັງຄົມ

# ຄຸນລັກສະນະຂອງໄວລຸ້ນ ບົ່ງບອກໄດ້ດ້ວຍ:

- ໄວຂື້ນບ່າວ - ຂື້ນສາວ ແມ່ນໄລຍະໜຶ່ງ (ຊ້ວງໜຶ່ງ)ຂອງເວລາທັງໝົດຂອງຊີວິດ ຊຶ່ງເດັກນ້ອຍຜູ້ໜຶ່ງໄດ້ມີ **ການພັດທະນາ ແລະ ສະແດງອອກ ຂອງຄຸນລັກສະນະທາງເພດ ຂັ້ນທີ 2**
  - ອາຍຸສະເລັ່ຍສໍາລັບເດັກຍິງ: 10 - 12 ປີ
  - ອາຍຸສະເລັ່ຍສໍາລັບເດັກຊາຍ: 12 - 14 ປີ

- ມີຄວາມຂັດແຍ້ງດ້ານຄ່ານິຍົມ, ຄວາມກົດດັນດ້ານອາລົມ ແລະ ຄວາມພ້ອມຕໍ່ທັດສະນະທີ່ແປກໃໝ່ (ທີ່ສຸດ), ຊຶ່ງນໍາໄປສູ່ຄວາມຫຼາກຫຼາຍດ້ານບັນຫາທາງຈິດຕະສາດ ແລະ ສັງຄົມ ຂອງໄວລຸ້ນ